

## ຮູບ ແລະ ປະຫວັດຂອງຜູ້ຂຽນ

ຊື່: ທ້າວ ບຸນທີ ຈັນທະລັງສໍ ອາຍຸ 47 ປີ

ອາຊີບ: ພະນັກງານຄູ

## ເຫດຜົນຂອງຜູ້ຂຽນບົດ:

ການປູກຖົ່ວດິນແມ່ນວຽກໜຶ່ງທີ່ບໍ່ຫຍຸ້ງຍາກແມ່ນຜູ້ໃດກໍ ສາມາດປູກໄດ້ ປູກໄວ້ກິນເປັນອາຫານຫວ່າງ ຫລື ນຳມາເປັນເຄື່ອງ ປຸງ ແຕ່ງອາຫານເພື່ອຄວາມແຊບຊ້ອຍ

ຖ້າປູກໄດ້ຫລາຍກາຍເປັນສິນຄ້າສູ່ຊຸມຊົນໃກ້ຄຽງ ຫລື ຕາມ ທ້ອງຕະຫລາດໄດ້ຄືກັນ

PDF created with pdfFactory Pro trial version www.pdffactory.com

ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຖົ່ວດິນ

(ສະບັບທົດລອງ)



ຂຽນໂດຍ: ທ້າວ ບຸນທີ ຈັນທະລັງສໍ

ຂໍ້ມູນຈາກ: ບ້ານ ນາໄຜ່ ເມືອງຄຳ ແຂວງຊຽງຂວາງ

ປີ 2007

## ເຊີ້ງ:ບໍ່ຢູ່ລ້າ

ໄຮ.....ໆ...　　ຮິວ....ໆ...
ມາໝູ່ເຮົາມາ　　ຮີບຊວນກັນມາ
ປູກຖົ່ວດິນສາ　　ຕາມປະເພນີ
ດິນເຮົາງາມດີ　　ຕ້ອງເຮັດຕ້ອງສ້າງ
ບໍ່ປະດິນຫວ່າງ　　ໄວ້ລ້າເສຍດາຍ
ປູກໃຫ້ຫຼາຍໆ　　ສິ່ງຂາຍຕະຫຼາດ
ເຮົານັ້ນສາມາດ　　ປູກສອງລະດູ
ຊ່າງເຮັດຊ່າງຮູ້　　ມີຢູ່ມີກິນ
ຕ້ອງນຳໃຊ້ດິນ　　ໃຫ້ມັນມີຄ່າ
ສົມຄຳເພິ່ນຊ່າ　　ວ່າລາວດຸໝັ່ນ
ໄຮ.....ໆ....　　ຮິວ.........

## ລຳ: ຊຽງຂວາງ

ໂອນໍ...ພໍເມື່ອມາເຫັນໜ້າ　　ຊາວປະຊາ
ປູກໝາກຖົ່ວ　　ຍິນສຽງຫົວອີ່ນອ້ອຍ
ຕາມພື້ນ　　ເພິ່ນປູກຖົ່ວດິນ
ຍິນສຽງຫົວ　　ສຽງເວົ້າບໍ່ເຊົາຢ່າງມ່ວນຊື່ນ
(ໄດ໋ໝູ່ເອີຍ)

PDF created with pdfFactory Pro trial version www.pdffactory.com

## <u>ຄຸນປະໂຫຍດ</u>

ຖົ່ວດິນເປັນພືດສຳຮອງທີ່ສາມາດແກ້ໄຂຊີວິດປະຈຳວັນຂອງປະຊາຊົນໄດ້,ປຸງແຕ່ງໃຫ້ອາຫານແຊບຂຶ້ນໄດ້ມີວິຕາມິນສູງ,ຖ້າຄອບຄົວໃດມີການປູກຫຼາຍກໍສາມາດສົ່ງຂາຍເປັນສິນຄ້າໄດ້.

## ບົດເລກ

ເຮົາປູກຖົ່ວດິນຂຸມໜຶ່ງໃສ່ແກ່ນຖົ່ວດິນຢູ່ 4 ແກ່ນຖ້າ 13 ຂຸມຈະໃສ່ແກ່ນຖົ່ວດິນຈັກແກ່ນ?

### ກາບ: ປູກໃຫ້ງາມ

ປູກຖົ່ວດິນ ຕ້ອງໃຫ້ເປັນແຖວ
ມັນແມ່ນແນວ ຖືກໄລຍະຫ່າງ
ປູກຈິ່ງຫວ່າງ ເສຍຫຍ້າງ່າຍດາຍ
ຫຼືເຮົາໄປ ຂ້າແມງຂ້າບົ້ງ

# ຄວາມຮູ້ພູມປັນຍາທ້ອງຖິ່ນ
# ການປູກຖົ່ວດິນ

ຮຽບໂຮມ ແລະຈັດໜ້າໂດຍ: ທ້າວ ຄຳຫລ້າ ພອນມະນີວົງ
ແຕ້ມໂດຍ: ທ້າວ ຄຳຫລ້າ ພອນມະນີວົງ
ຜູ້ຮຽບຮຽງ: ອ.ຈ ໂພໄຊ ຈັນທະວົງສາ
ເຈົ້າຂອງ: ສຶກສາເມືອງຄຳ ແຂວງຊຽງຂວາງ

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໄດ້ບັນຈຸເອົາເນື້ອໃນ, ຂັ້ນຕອນການປະຕິບັດຕ່າງໆລວມທັງຄຸນປະໂຫຍດຂອງການປູກຖົ່ວດິນທ້ອງຖິ່ນບ້ານ. ນາປາ ເມືອງ ຄຳ. ແຂວງຊຽງຂວາງໂດຍແມ່ນຄູເຝິກຊຸມຊົນເປັນຜູ້ໃຫ້ຂໍ້ມູນ ແລະຂຽນດ້ວຍຕົນເອງໂດຍຜ່ານການຮັບຮອງແລະຮຽບຮຽງຈາກຫ້ອງການສຶກສາປະຈຳເມືອງ. ພະແນກສຶກສາປະຈຳແຂວງ,ສູນອົບຮົມຮ່ວມພັດທະນາ, ກົມພາລະ ແລະສິລະປະສຶກສາ (ກະຊວງສຶກສາທິການ).

ປຶ້ມເຫຼັ້ມນີ້ຄະນະຈັດທຳມີຈຸດປະສົງແນະນຳ ແລະຈັດທຳຂຶ້ນເພື່ອເປັນຄູ່ມື ແລະເປັນບ່ອນອີງໃຫ້ແກ່ຄູອາຈານໃນການສິດສອນວິຊາພູມປັນຍາທ້ອງ ຖິ່ນ, ດັ່ງນັ້ນຄູຕ້ອງເລືອກຫົວຂໍ້ທີ່ເໝາະສົມກັບໄວອາຍຸຂອງເດັກໃນແຕ່ລະຂັ້ນ ຮຽນໂດຍອີງຕາມສະມັດຕະພາບຂອງບົດສອນເຊິ່ງໄດ້ລະບຸໄວ້ໃນແຜນການ ສອນປະຈຳປີ, ປະຈຳເດືອນ ແລະ ປະຈຳອາທິດ,ເຖິງຢ່າງໃດກໍຕາມຄູຕ້ອງ ໄດ້ເອົາໃສ່ຕື່ມໃນການເອົາຄວາມຮູ້ທ້ອງຖິ່ນເຂົ້າມາສິດສອນເພື່ອເຮັດໃຫ້ເນື້ອ ໃນຂອງຂະບວນການຮຽນຮູ້ຂອງເດັກນ້ອຍມີຄວາມສົມບູນ ແລະມີຄວາມສອດ ຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ.

ຄະນະຈັດທຳປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ຄິດວ່າເນື້ອໃນຍັງມີຫຼາຍອັນທີ່ຍັງບໍ່ທັນສົມບູນ, ຄົບຖ້ວນແລະຂາດຫາຍໄປພວກເຮົາຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກຄູ-ອາຈານຜູ້ທີ່ຊົມໃຊ້ທຸກທ່ານ,ພວກເຮົາ ພ້ອມແລ້ວທີ່ຈະປັບປຸງປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໃຫ້ສົມບູນຂຶ້ນແລະ ຂໍຂອບໃຈລ່ວງໜ້າກ່ຽວກັບຄຳຕຳນິຕິຊົມຂອງທ່ານທີ່ມີຕໍ່ພວກເຮົາ.

ຄະນະຈັດທຳ

ເອົາຝຸ່ນຄອກລົງປົກແກ່ນຖົ່ວດິນ ແລະກໍເຂ່ຍດິນປົກເອົານ້ຳມາຫົດໃຫ້ຊຸ່ມພໍດີ





## ຫຼັກການທີ່ສຳຄັນ

ການປູກຖົ່ວດິນຕ້ອງປູກເຮັດເປັນແຖວໄລຍະຫ່າງຂອງຕົ້ນຖົ່ວດິນແມ່ນສອງຄືບເພື່ອງາຍໃນການບົວລະບັດເສຍຫຍ້າ ແລະພູນດິນ.

PDF created with pdfFactory Pro trial version www.pdffactory.com

## ວິທີຂັ້ນຕອນການປູກ

ຖາງຫຍ້າບ່ອນທີ່ຈະປູກ,ຂຸດດິນຕາກໄວ້ໃຫ້ຫຍ້າຕາຍຄູນດິນຂຶ້ນເຮັດເປັນໜານຕາມຄວາມເໝາະສົມກັບສະຖານທີ່.



ຂຸດເປັນຂຸມໄລຍະຫ່າງຂອງແຕ່ລະຂຸມປະມານ 35 ຊັງຕີແມັດ(ສອງຄືບ) ແຕ່ລະຂຸມເຮົາຄວນເອົາແກ່ນຖົ່ວດິນລົງໃສ່ປະມານ 3-5 ແກ່ນ.

## ຄວາມເປັນມາ:

ພາຍຫຼັງຈາກການເຮັດໄຮ່ເຮັດນາ,ປະຊາຊົນໃນຂົງເຂດນີ້ແມ່ນພາກັນນິຍົມປູກຖົ່ວດິນເປັນພືດສຳຮອງ,ເພາະປູກງ່າຍໃຫ້ຜົນຜະລິດຫຼາຍ ແລະເປັນທີ່ນິຍົມຂອງຄົນທົ່ວໄປເພາະນຳມາປະກອບອາຫານໄດ້ຫຼາຍຢ່າງ,ມາເຖິງປະຈຸບັນນີ້ປະຊາຊົນໃນທ້ອງຖິ່ນກໍຍັງນິຍົມກັນປູກ.

## ຕົ້ນ,ເຄືອຖົ່ວດິນ

ຖົ່ວດິນເປັນພືດສະນິດໜຶ່ງ(ພືດລົ້ມລຸກ)ມີລັກສະນະເປັນເຄືອອອກໝາກຢູ່ຕາມຮາກຂອງຕົ້ນ ຢູ່ໃນພື້ນດິນ.

## ໝາກຖົ່ວດິນ

ໝາກຖົ່ວດິນເປັນໜ່ວຍກົມໆຍາວ,ມີໃບເປັນແກ່ນ,ໝາກຖົ່ວດິນໜ່ວຍໜຶ່ງມີໃບປະມານ 3 – 4 ອັນ

PDF created with pdfFactory Pro trial version www.pdffactory.com

## <u>ອຸປະກອນ</u>

ແນວພັນຖົ່ວດິນ



ພ້າຂໍ,ຈົກ,ຊວ້ານ



ບົວຫົດນ້ຳ



ຝຸ່ນຄອກ



## <u>ສະຖານທີ່ປູກຖົ່ວດິນ</u>

ການປູກຖົ່ວດິນແມ່ນຈະປູກຕາມສວນຖ້າເຮັດຫຼາຍ,ຖ້າເຮັດໜ້ອຍກໍປູກຕາມສວນຄົວໃນຂອບເຂດຮົ້ວສວນເຮືອນຊານ.

## <u>ລະດູການປູກຖົ່ວດິນ</u>

ສາມາດປູກໄດ້ສອງລະດູຄື:

- ລະດູຝົນເລີ້ມປູກແຕ່ເດືອນ 6 ຫາເດືອນ 7
- ລະດູແລ້ງເລີ້ມປູກແຕ່ເດືອນ 1 ຫາເດືອນ 2

ແຕ່ລະໆດູມີອາຍຸພຽງ 4 ເດືອນກໍກູໄດ້ໂລດ

## <u>ການຄັດເລືອກດິນທີ່ເໝາະສົມ</u>

ຄວນເລືອກດິນດຳ,ດິນຟຸຟູ່ຍດີ

ດິນຟຸຟູ່ຍປະສົມດິນຊາຍກໍໄດ້

## <u>ການຄັດເລືອກແນວພັນ</u>

ຄວນເລືອກເອົາຝັກໃຫຍ່ແກ່ນຕຶ່ງ,ບໍ່ມີປີ້ວແມງກັດ,ເຈະຖ້າເລື້ອກໄດ້ແລ້ວຄວນເກັບມ້ຽນບ່ອນອາກາດປອດໂປ່ງດີບໍ່ໃຫ້ຖືກສິ່ງປຽກຊຸ່ມ

PDF created with pdfFactory Pro trial version www.pdffactory.com